ໂຮງຮຽນວັນອາທິດ

ວັນອາທິດທີ 23 ສິງຫາ 2020 (08-23-2020)

ພວກເຮົາເພີ້ມກຳລັງໃຫ້ກັນແລະກັນ

ເມື່ອໃດທີ່ມີຄົນສະແດງວ່າເຂົາເຈົ້າມີຫລັງເຈົ້າ?

ຈຸດສຳຄັນໃນບົດຮຽນ: ພວກເຮົາເພີ້ມຄວາມເຂັ້ມແຂງໃຫ້ກັນແລະກັນເພື່ອດຳລົງຊີວິດຕາມພຣະປະສົງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ຂ້າພະເຈົ້າຮູ້ສຶກອາຍຫລາຍ. ຂ້າພະເຈົ້າຢູ່ໃນຫ້ອງອອກກຳລັງກາຍ, ແຕ່ໃນເວລານັ້ນຂ້າພະເຈົ້າເຮັດຫຍັງບໍ່ໄດ້ເລີຍ. ຂ້າພະເຈົ້າໄດ້ນອນເອົາຫລັງວາງລົງກັບພື້ນໂດຍມີເຄື່ອງຍົກນ້ຳໜັກເຕັງໜ້າເອິກຂອງຂ້າພະເຈົ້າຢູ່. ບໍ່ວ່າຂ້າພະເຈົ້າຈະພະຍາຍາມຍູ້ເທົ່າໃດກໍຕາມ, ແຕ່ແຂນຂອງຂ້າພະເຈົ້າເໜັງບໍ່ໄດ້. ພາຍໃຕ້ຄວາມອ່ອນເພຍ ທ້ງສອງແຂນໄດ້ຍອມແພ້ຢ່າງສິ້ນເຊີງ. ຂ້າພະເຈົ້າຮູ້ຈັກກົດເກນຂໍ້ທຳອິດຂອງການຝຶກອົບຮົມຄວາມເຂັ້ມແຂງ ແລະການອອກກຳລັງກາຍ ແຕ່ຂ້າພະເຈົ້າໄດ້ຝືນຕ່ໍກົດເກນນັ້ນແລ້ວ ແລະດຽວນີ້ຂ້າພະເຈົ້າຮູ້ສຶກອຶດອັດໃຈທີ່ປະເຊີນກັບຜົນສະທ້ອນນັ້ນ.

ເມື່ອຍົກນ້ຳໜັກ, ຈະຕ້ອງມີຜູ້ວາງຈຸດ ຄືຜູ້ທີ່ຊຸກຍູ້ໃຫ້ທ່ານອິດທົນແລະເຂົ້າມາຊ່ວຍຊູ ຖ້າແຂນຂອງທ່ານຫາກອ່ອນເພຍລົງ. ເຖິງປານນັ້ນຂ້າພະເຈົ້າກໍຖືກຂັງໂດຍເຄື່ອງຍົກນ້ຳໜັກຢູ່ໜ້າເອິກຂອງຂ້າພະເຈົ້າເພາະວ່າຂ້າພະເຈົ້າຄິດແບບໂງ່ໆ ທີ່ວ່າຂ້າພະເຈົ້າສາມາດເຮັດໄດ້ດ້ວຍຕົນເອງ.

ຂ້າພະເຈົ້າຕ້ອງການຄົນທີ່ວາງຈຸດໃນຊີວິດຄຣິສຕຽນຂອງຂ້າພະເຈົ້າ ແລະທ່ານກໍຄືກັນ. ພຣະເຈົ້າໄດ້ປະທານຄຣິສຕະຈັກໃຫ້ພວກເຮົາເພື່ອເປັນການຊ່ວຍເຫຼືອກັນ. ເພື່ອນຄຣິສຕຽນໜຸນໃຈໃຫ້ພວກເຮົາອິດທົນ ແລະພວກເຂົາມາຮ່ວມໃນເວລາທີ່ຈິດວິນຍານຂອງພວກເຮົາທ້ໍຖອຍ ແລະພວກເຮົາຮູ້ສຶກຖືກທຸບຕີແລະຖືກດຶງລົງ ຍ້ອນບັນຫາໃນຊີວິດ. ໃນຂະນະທີ່ພຣະວິນຍານຂອງພຣະເຈົ້າເຮັດວຽກຜ່ານພວກເຮົາ, ພຣະອົງໃຊ້ພວກເຮົາເພື່ອເພີ້ມຄວາມເຂັ້ມແຂງໃຫ້ກັນແລະກັນຢູ່ໃນໂລກທີ່ຮຽກຮ້ອງໃຫ້ພວກເຮົາເດີນຕາມເສັ້ນທາງທີ່ແຕກຕ່າງ.

ພຣະຄັມພີກ່າວວ່າແນວໃດ?

1. <u>ເອເຟໂຊ 5:8-14</u>

8 ເພາະວ່າເມື່ອກ່ອນ, ທ່ານທ້ງຫລາຍຢູ່ຝ່າຍຄວາມມືດ ແຕ່ບັດນີ້ກໍຢູ່ຝ່າຍຄວາມສວ່າງໃນອົງພຣະຜູ້ເປັນເຈົ້າ ຈົ່ງດຳເນີນຊີວິດເໝືອນຢູ່ຝ່າຍຄວາມສວ່າງແລ້ວ 9 (ດ້ວຍວ່າຜົນຂອງຄວາມສວ່າງນັ້ນ ຄືຄວາມດີ ແລະຄວາມຊອບທັມກັບຄວາມຈິງທຸກຢ່າງ) 10 ທ່ານທ້ງຫາຍຈົ່ງພຍາຍາມຮຽນຮູ້ຈັກວ່າ ເຮັດອັນໃດຈຶ່ງຈະເປັນທີ່ຊອບພຣະທັຍອົງພຣະຜູ້ເປັນເຈົ້າ 11 ແລະຢ່າເຂົ້າສ່ວນກັບກິຈການຂອງຄວາມມືດທີ່ບ່ໍມີປໂຍດ ແຕ່ຈົ່ງເປີດເຜີຍກິຈການນັ້ນໃຫ້ປາກົດດີກວ່າ 12 ເພາະວ່າແມ່ນແຕ່ຈະເວົ້າເຖິງການເຫລ່ານັ້ນທີ່ເຂົາເຮັດໃນທີ່ລັບລີ້ ກໍຍັງເປັນການໜ້າອາຍ 13 ແຕ່ເມື່ອສິ່ງສາຣະພັດຖືກເປີດເຜີຍອອກໂດຍຄວາມສວ່າງ ສິ່ງນັ້ນກໍປາກົດແຈ້ງ ເພາະວ່າທຸກສິ່ງທີ່ປາກົດແຈ້ງກໍຄືຄວາມສວ່າງ 14 ເຫດສັນນັ້ນຈຶ່ງມີຄຳກ່າວວ່າ, "ຄົນທີ່ນອນຫລັບເອີຍ, ຈົ່ງຕື່ນຂຶ້ນ ຈົ່ງຟື້ນຂຶ້ນມາຈາກຄວາມຕາຍ ແລະພຣະຄຣິດຈະຊ້ໍາສ່ອງສວ່າງໃສ່ເຈົ້າ"

ຕັ້ງແຕ່ໃດໆ ມາ, ຄົນທັງຫລາຍພະຍາຍາມຊັກຊວນໃຫ້ຄຣິສຕຽນເຊື່ອວ່າພວກເຮົາສາມາດຕິດຕາມພຣະເຢຊູໄດ້ ໃນຂະນະທີ່ຍັງເຮັດບາບຄືກັບຝ່າຍໂລກ. ແຕ່ມັນເປັນໄປບໍ່ໄດ້! ໃຫ້ສັງເກດຄວາມແຕກຕ່າງໃນຂໍ້ທີ 8 ຈາກຄວາມມືດທີ່ ພວກເຮົາເຄີຍດຳເນີນຊີວິດຢູ່ກັບຄວາມສວ່າງໃນພຣະຄຣິດທີ່ພວກເຮົາມີໃນເວລານີ້.

ສິ່ງທ້າທາຍຂອງຄວາມບໍຣິສຸດແມ່ນເຫັນໄດ້ໃນສອງຝ່າຍທີ່ຢູ່ກົງກັນຂ້າມ ທີ່ເຮົາປະເຊີນ.

➢**ພວກເຮົາຕໍ່ສູ້ກັບການທົດລອງຈາກພາຍໃນ, ຈາກໃຈຂອງພວກເຮົາເອງ**. ເຮົາແຕ່ລະຄົນມີຄວາມປາຖນາຢາກເຮັດ ບາບທີ່ມາຈາກທັມມະຊາດບາບຂອງເຮົາເອງ. ທ່ານແລະຂ້າພະເຈົ້າອາດຈະມີບັນຫາການຕໍ່ສູ້ທີ່ແຕກຕ່າງກັນ ແລະ ສແວງຫາສິ່ງທີ່ແຕກຕ່າງກັນ, ແຕ່ "ເພດຄົນເກົ່າ" ທີ່ຢູ່ໃນເຮົາ ເຮັດໃຫ້ພວກເຮົາເຮັດບາບ.

➢ **ພວກເຮົາປະເຊີນກັບການລໍ້ລວງຈາກພາຍນອກ,** ຈາກໂລກທີ່ຜິດບາບ. ຄົນອື່ນລໍ້ລວງເຮົາໃຫ້ປະນີປະນອມຄວາມ ເຊື່ອຂອງເຮົາໂດຍການເຂົ້າຮ່ວມໃນສິ່ງທີ່ພຣະເຈົ້າຕໍ່ຕ້ານ.

ຄ້າຍຄືກັບເຄື່ອງຍົກນ້ຳໜັກ, ການຕໍ່ຕ້ານຈາກສາຣະທິດທີ່ໜັກໜ່ວງນີ້ໄດ້ເຕັງເທິງພວກເຮົາ ແຕ່ດ້ວຍ "ຜູ້ວາງຈຸດ" ທີ່ຄອຍຊ່ອຍເຫລືອຄືກັບພຣະວິນຍານບໍຣິສຸດທີ່ສະຖິດຢູ່ພາຍໃນພວກເຮົາ ແລະໄພ່ພົນຂອງພຣະເຈົ້າທີ່ຍ່າງຄຽງຂ້າງ ພວກເຮົາ, ພວກເຮົາສາມາດຕ້ານທານກັບການຕໍ່ຕ້ານທຸກຢ່າງໄດ້.

ບໍ່ວ່າພວກເຮົາຈະຄິດແນວໃດວ່າພວກເຮົາສາມາດປະເຊີນກັບບາບໄດ້ດ້ວຍຕົນເອງ, ແຕ່ກໍເປັນໄປບໍ່ໄດ້. ຍ້ອນ ຫຍັງ? ເພາະວ່າພຣະເຈົ້າບໍ່ໄດ້ສ້າງພວກເຮົາໃຫ້ຕໍ່ຕ້ານກັບຄວາມບາບຢ່າງໂດດດ່ຽວ. ພຣະອົງໄດ້ປ້ອນຄວາມເຂັ້ມ ແຂງເຂົ້າໄປໃນຈິດວິນຍານຂອງພວກເຮົາທີ່ມີຄວາມຕ້ອງການຢ່າງຕໍ່ເນື່ອງ ເພື່ອຮັບການສນັບສນູນທາງວິນຍານຈາກ ພຣະວິນຍານບໍຣິສຸດແລະຈາກພຣະກາຍຂອງພຣະຄຣິດ(ເພື່ອນໆ ຄຣິສຕຽນ).

ຈາກຂໍ້ຄວາມນີ້, ພວກເຮົາເຫັນຫລາຍທາງທີ່ພວກເຮົາສາມາດເພີ້ມຄວາມເຂັ້ມແຂງໃຫ້ກັນແລະກັນໄດ້ໃນການຕໍ່ ຕ້ານທາງທີ່ຊົ່ວຮ້າຍຂອງໂລກ.

➢ **ພວກເຮົາສາມາດຢືນຢັນໝາກຜົນຂອງຂ່າວປະເສີດໃນຊີວິດຂອງກັນແລະກັນ** (ຂໍ້ທີ 9). ເມື່ອພວກເຮົາເຫັນອ້າຍ ເອື້ອຍນ້ອງຄຣິສຕຽນຂອງພວກເຮົາສະແດງຄຸນລັກສະນະທີ່ເປັນເໝືອນດັ່ງພຣະຄຣິດຄື ຄວາມດີ, ຄວາມຊອບທັມ, ແລະຄວາມຈິງ, ພວກເຮົາຄວນຮັບຮູ້ແລະຢືນຢັນດ້ວຍຄຳເວົ້າຂອງເຮົາ.

➢ **ພວກເຮົາສາມາດຊ່ວຍເຫຼືອກັນແລະເຫັນວ່າເຮັດໃຫ້ພຣະຜູ້ເປັນເຈົ້າພໍພຣະທັຍ** (ຂໍ້ 10). ພວກເຮົາບໍ່ເຄີຍເຫັນສິ່ງ ຕ່າງໆຢ່າງຈະແຈ້ງເທົ່າທີ່ຄວນ. ພວກເຮົາແຕ່ລະຄົນນຳຄວາມລຳອຽງຂອງຕົນເອງມາຫາກັນ, ແລະພວກເຮົາສາມາດ ເມື່ອຍລ້າທາງວິນຍານໃນມື້ໃດມື້ນຶ່ງ. ສິ່ງທັງໝົດເຫລົ່ານີ້ໄດ້ທັນເຫຄວາມເຂົ້າໃຈຂອງພວກເຮົາ.

➢ **ພວກເຮົາສາມາດຊ່ວຍກັນເຊິ່ງກັນ ແລະກັນເປີດເຜີຍຄວາມມືດແທນທີ່ຈະເຂົ້າຮ່ວມໃນຄວາມມືດ** (ຂໍ້ທີ 11 (12). ວິທີການຕ່າງໆຂອງໂລກແມ່ນໄດ້ຮັບຄວາມນິຍົມຫຼາຍ. ແລະຄວາມຈິງຂອງຂ່າວປະເສີດບໍ່ເປັນແນວນັ້ນ. ມີໜ້ອຍຄົນ ທີ່ຊົມຊື່ນໃນການເປັນຊົນກຸ່ມນ້ອຍ, ແຕ່ພວກເຮົາພົບເຫັນຄວາມເຂັ້ມແຂງຢ່າງຫລວງຫລາຍ.

➢ **ພວກເຮົາສາມາດຊ່ວຍກັນແລະກັນເພື່ອສ່ອງແສງສະຫວ່າງຂອງພຣະຄຣິດ** (ຂໍ້ 14). ເປັນສິ່ງທີ່ໜ້າສັງເກດວ່າ ຄວາມມືດຈະມີຫລາຍເທົ່າໃດເມື່ອແສງສະຫວ່າງນ້ອຍໆ ໄດ້ສ່ອງໃສ່. ເຊັ່ນດຽວກັບແສງທຽນ, ຄຣິສຕຽນຕ້ອງແຕກ ຕ່າງຈາກຄົນທີ່ລາວສແວງຫາທີ່ຈະມີອິດທິພົນເໜືອ. ຂໍໃຫ້ຊ່ວຍກັນແລະກັນສ່ອງສະຫວ່າງໃນໂລກ.

ໂລກຈະໃຫ້ການລໍ້ລວງຫລາຍຢ່າງແກ່ພວກເຮົາ. ແຕ່ຜ່ານທາງພຣະເຢຊູແລະໄພ່ພົນຂອງພຣະອົງ, ພວກເຮົາມີ ຜູ້ໃຫ້ການສນັບສນຸນທີ່ພວກເຮົາຕ້ອງການເພື່ອຈະອົດທົນໄດ້.

2. <u>ເອເຟໂຊ 5:15-17</u>

15 ເຫດສັນນັ້ນ, ທ່ານທັງຫລາຍຈົ່ງລະວັງໃນການດຳເນີນຊີວິດໃຫ້ດີ ຢ່າໃຫ້ເໝືອນຄົນໂຣ້ປັນຍາ ແຕ່ໃຫ້ເໝືອນຄົນມີ ປັນຍາ 16 ຈົ່ງສວຍໂອກາດ ເພາະວ່າທຸກວັນນີ້ ເປັນຄາວຊົ່ວຮ້າຍ 17 ເຫດສັນນັ້ນ, ຢ່າເປັນຄົນໂງ່ ແຕ່ຈົ່ງເຂົ້າໃຈນ້ຳ ພຣະທັຍຂອງອົງພຣະຜູ້ເປັນເຈົ້າວ່າເປັນຢ່າງໃດ

ສິນຄ້າເລັກນ້ອຍມີຄ່າຫຼາຍກວ່າເວລາ. ພວກເຮົາຍິນດີໃນຄຸນຄ່າຂອງມັນເພາະວ່າເມື່ອມັນຈາກໄປແລ້ວ, ບໍ່ມີສິ່ງ

ໃດສາມາດທົດແທນໄດ້. ສິ່ງທີ່ຈຳແນກພວກເຮົາບໍ່ແມ່ນວ່າພວກເຮົາມີເວລາເທົ່າໃດ, ແຕ່ວ່າພວກເຮົາເຮັດຫຍັງກັບເວລາທີ່ພວກເຮົາໄດ້ຮັບ.

ພວກເຮົາສາມາດຫລຸດຜ່ອນກິຈກັມຂອງມະນຸດລົງເປັນສອງພື້ນຖານທີ່ເຮົາປະເຊີນ; ຜູ້ຄົນທີ່ປະເຊີນຊີວິດຈາກມຸມມອງທາງໂລກຫລືຈາກມຸມມອງຂອງພຣະເຈົ້າ. ແນວທາງຂອງໂລກແມ່ນບໍ່ສລາດ, ເພາະມາຈາກແນວຄິດຂອງມະນຸດ; ການປະເຊີນແບບພຣະເຈົ້ານັ້ນສລາດ ເພາະວ່າໄດ້ອີງໃສ່ພຣະຄຳຂອງພຣະອົງ. ນີ້ແມ່ນສາມທາງທີ່ຄລິສຕຽນຄວນຄິດອີກໃນການໃຊ້ເວລາຂອງພວກເຮົາ:

➢ **ດຳລົງຊີວິດຢ່າງສລາດ**. ຊີວິດຂອງພວກເຮົາມີຄວາມສຳຄັນ, ສະນັ້ນພວກເຮົາຄວນ "ເອົາໃຈໃສ່ຢ່າງລະມັດລະວັງ, ວ່າຈະດຳເນີນຊີວິດຢ່າງໃດ" (ຂໍ້ທີ 15). ພວກເຮົາຄວນໃຊ້ເວລາຢ່າງສລາດເພື່ອຊີວິດຂອງພວກເຮົາສະທ້ອນເຖິງພຣະສະຕິປັນຍາຂອງພຣະເຈົ້າ. ໃນຂະນະທີ່ໂລກໂດຍທົ່ວໄປໃຊ້ຊີວິດຢູ່ພຽງແຕ່ຄິດເຖິງວັນນີ້ເທົ່ານັ້ນ, ຄຣິສຕຽນຄວນມີຊີວິດຢູ່ໃນວັນນີ້ໃນຂະນະທີ່ຍັງຄິດເຖິງຊີວິດນິຣັນອີກນຳ. ຄົນສ່ວນຫລາຍຈະຕື່ນນອນໃນແຕ່ລະເຊົ້າແລະເລີ່ມເຮັດວຽກທີ່ຫຍຸ້ງໃນແຕ່ລະມື້. ແນວໃດກໍຕາມ, ຄຣິສຕຽນໃຫ້ການອຸທິດຕົນກັບພຣະເຈົ້າເປັນທີ່ນຶ່ງກ່ອນທີ່ຈະເລີ່ມຕົ້ນກິຈກັມໃນສ່ວນທີ່ເຫຼືອຂອງມື້ນັ້ນ.

➢**ດຳລົງຊີວິດໂດຍມີເຈດຕະນາ**. ເມື່ອໂປໂລບອກພວກເຮົາວ່າໃຫ້ໃຊ້ເວລາໃຫ້ເກີດປໂຍດຫລາຍທີ່ສຸດ, ເພິ່ນໄດ້ທ້າທາຍພວກເຮົາໃຫ້ສວຍເອົາໂອກາດທຸກຢ່າງທີ່ພວກເຮົາສາມາດເຮັດດີ. ນັ້ນໝາຍຄວາມວ່າພວກເຮົາຄວນດຳລົງຊີວິດ "ຕາມຈຸດປະສົງ." ຫຼາຍຄົນເຂົ້າໃຈຊີວິດແບບບໍ່ມີສະຕິ ພຽງແຕ່ກວດເບິ່ງ "ລາຍການທີ່ຕ້ອງເຮັດ"ເທົ່ານັ້ນແລະກ້າວໄປສູ່ສິ່ງທີ່ຈະເຮັດຕໍ່ໄປ. ແຕ່ຄຣິສຕຽນຄວນຊອກຫາທຸກໆໂອກາດ, ທຸກໆ ໜ້າວຽກ, ແລະທຸກໆຄວາມສັມພັນເພື່ອເຫັນແກ່ຂ່າວປະເສີດ.

➢ **ດຳລົງຊີວິດດ້ວຍຄວາມເຊື່ອຟັງ**. ແທນທີ່ຈະເປັນຄົນໂງ່, ໂປໂລສັ່ງພວກເຮົາໃຫ້ "ເຂົ້າໃຈນຳພຣະທັຍຂອງພຣະຜູ້ເປັນເຈົ້າ." ເວົ້າອີກຢ່າງນຶ່ງ, ພວກເຮົາຄວນຮູ້ພຣະຄຳຂອງພຣະເຈົ້າ. ການຮູ້ຈັກພຣະຄຳຂອງພະເຈົ້າໝາຍເຖິງການເຊື່ອຟັງພຣະຄຳຂອງພຣະອົງຕລອດໄປ. ໃນທຸກສິ່ງທີ່ພວກເຮົາເຮັດ, ທຸກບ່ອນທີ່ພວກເຮົາໄປ, ແລະທຸກໆທາງເລືອກທີ່ພວກເຮົາເລືອກ, ພວກເຮົາຄວນພະຍາຍາມທີ່ຈະເຊື່ອຟັງພຣະເຈົ້າແລະບໍ່ຄວນປະສົມປົນເປກັບມາດຕະຖານຂອງວັດທະນະທັມ. ນີ້ບໍ່ໄດ້ໝາຍຄວາມວ່າທຸກສິ່ງທຸກຢ່າງທີ່ພວກເຮົາເຫັນແມ່ນໂລກກຳລັງເຮັດຜິດ, ແຕ່ໝາຍຄວາມວ່າພວກເຮົາດຳລົງຊີວິດໂດຍການຈັດລຳດັບຄວາມສຳຄັນທີ່ແຕກຕ່າງກັນ.

ໃນຖານະທີ່ເປັນພຣະກາຍຂອງພຣະຄຣິດ, ຂໍໃຫ້ພວກເຮົາເຮັດຕາມໜ້າທີ່ຮັບຜິດຊອບຂອງພວກເຮົາໃນໂລກນີ້ ໂດຍເຫັນຄວາມເປັນນິຣັນໃນພາຍພາກໜ້າ. ແລະຂໍໃຫ້ພວກເຮົາເພີ່ມຄວາມເຂັ້ມແຂງໃຫ້ກັນແລະກັນໂດຍການເປັນຜູ້ບົວຣະບັດທີ່ສລາດໃນການໃຊ້ເວລາຂອງພວກເຮົາ.

3. <u>ເອເຟໂຊ 5:18-21</u>

18 ແລະຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສັຽຄົນ ແຕ່ຈົ່ງເຕັມໄປດ້ວຍພຣະວິນຍານກໍດີກວ່າ 19 ຈົ່ງສົນທະນາກັນດ້ວຍເພງສັຣເສີນ ເພງນະມັສການ ແລະເພງຍ້ອງຍໍສໍຣະເສີນຝ່າຍພຣະວິນຍານ ຄືຮ້ອງເພງແລະສັຣເສີນຈາກໃຈຂອງທ່ານ ທັງຫລາຍຖວາຍແດ່ອົງພຣະຜູ້ເປັນເຈົ້າ 20 ຈົ່ງຂອບພຣະຄຸນພຣະເຈົ້າ ຄືພຣະບິດາສຳລັບສິ່ງສາຣະພັດສເມີ ໃນພຣະນາມຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ 21 ເນື່ອງດ້ວຍເຈົ້າມີຄວາມຢຳເກງພຣະຄຣິດ ຈົ່ງຍອມຟັງເຊິ່ງກັນແລະກັນ

ພວກເຮົາບໍ່ໄດ້ດຳລົງຊີວິດຕາມກະແສວັທນະທັມ. ບາງຄົນຮ້ອງດ່າຄຳຫຍາບຄາຍໃສ່ຄົນແປກໜ້າຕາມທາງຫລວງ. ຫລາຍຄົນໄດ້ມຶນເມົາກັບຄວາມເຫັນແກ່ຕົວ, ຄວາມພາກພູມໃຈ, ຄວາມໂກດແຄ້ນ, ແລະຄວາມກຽດຊັງ. ໃນເກືອບທຸກພາກສ່ວນຂອງວັທນະທັມຂອງພວກເຮົາ, ພວກເຮົາສະແດງອອກເຖິງການໃຊ້ຊີວິດຢູ່ພາຍໃຕ້ການປົກຄອງຕົນເອງ.

ພວກເຮົາບໍ່ຄວນຄິດວ່າວັທນະທັມຂອງພວກເຮົາແມ່ນສິ່ງທຳອິດທີ່ສະແດງພຶດຕິກັມດັ່ງກ່າວທີ່ບໍ່ດີ. ຄົນເຮົາໄດ້ລ່ວງລະເມີດຕໍ່ກັນແລະກັນ ແລະຕໍ່ຕ້ານອຳນາດການປົກຄອງຕັ້ງແຕ່ເດີມມາ. ຍ້ອນຄວາມບາບ, ບໍ່ມີໃຜໃນພວກເຮົາຄິດກ່ຽວກັບຜູ້ອື່ນຢ່າງສົມບູນ ຕໍ່ຕ້ານອຳນາດນຶ່ງ. ນັ້ນແມ່ນສິ່ງທີ່ເຮັດໃຫ້ພຣະທັມເອເຟໂຊ 5 ໂດດເດ່ັນ. ພຣະທັມນີ້ເວົ້າເຖິງພື້ນຖານວັທນະທັມຂອງພວກເຮົາໃນທຸກມື້ນີ້ຄືກັບທີ່ໄດ້ເວົ້າກັບຊາວເອເຟໂຊໃນສັຕະວັດທຳອິດ.

ເມື່ອພຣະເຢຊູຊົງຊ່ວຍພວກເຮົາໃຫ້ພົ້ນ, ພຣະອົງຊົງປ່ຽນແປງພວກເຮົານຳອີກ. ການປ່ຽນແປງນັ້ນບໍ່ໄດ້ເກີດຂຶ້ນໂດຍຜ່ານການປັບແຕ່ງໃໝ່ໆ ງ່າຍໆ; ແຕ່ແມ່ນການຫັນປ່ຽນທັງໝົດຂອງຫົວໃຈ, ຄວາມຄິດ, ແລະຄວາມປະສົງ. ທາງຂອງການຫັນປ່ຽນແມ່ນພຣະວິນຍານບໍຣິສຸດຂອງພຣະເຈົ້າທີ່ຈະສະຖິດຢູ່ໃນພວກເຮົາ. ແທນທີ່ຈະຖືກມອມເມົາໂດຍຄວາມເຫັນແກ່ຕົວ, ພຣະວິນຍານນຳພາພວກເຮົາໃຫ້ນະມັສການແລະຍອມຢູ່ໃຕ້ພຣະເຈົ້າ. ເພື່ອຊຸກຍູ້ໃຫ້ເຮົາມີຄວາມສັມພັນທີ່ຖືກຕ້ອງກັບພຣະເຈົ້າ, ພຣະວິນຍານຈະປ່ຽນຊີວິດເຮົາໂດຍໄຕ່ຕອງໄປສູ່ການດຳລົງຊີວິດທີ່ຊອບທັມ. ພຣະອົງຍັງຍ້າຍທິດທາງຂອງການນະມັສການຂອງພວກເຮົາຈາກຕົວເຮົາເອງໄປນະມັສການພຣະເຈົ້າ. ໃນເວລາທີ່ພວກເຮົາເຕັມລົ້ນໄປດ້ວຍພຣະວິຍານ, ຄວາມຮັກຂອງພວກເຮົາຕໍ່ພຣະເຈົ້າກໍໄດ້ສຳແດງອອກໃນການສັຣເສີນພຣະເຈົ້າໂດຍຕົງ, ບໍ່ແມ່ນຕໍ່ຕົວເຮົາເອງ.

ເພື່ອປັບປຸງຄວາມສັມພັນທີ່ຖືກຕ້ອງກັບຄົນອື່ນ, ພຣະວິນຍານຫັນປ່ຽນການດຳລົງຊີວິດທີ່ເຫັນແກ່ຕົວໄປສູ່ການດຳລົງຊີວິດທີ່ຍອມຈຳນົນ:“ *ເນື່ອງດ້ວຍເຈົ້າມີຄວາມຢຳເກງພຣະຄຣິດ ຈົ່ງຍອມຟັງເຊິ່ງກັນແລະກັນ*" (ຂໍ້ທີ 21). ການດຳລົງຊີວິດແບບຍອມເຊື່ອຟັງແມ່ນວິທີທີ່ພຣະເຈົ້າປະສົງໃຫ້ສະມາຊິກໂບດດຳລົງຊີວິດຮ່ວມກັນ ພຣະເຈົ້າບໍ່ຕ້ອງການໃຫ້ຄຣິສຕະຈັກຂອງພຣະອົງເຕັມໄປດ້ວຍຄົນທີ່ເຫັນແກ່ຕົວ ຜູ້ທີ່ສແວງຫາຄວາມກ້າວໜ້າຕາມແຜນການຂອງຕົນເອງ. ແຕ່ໃນທາງກົງກັນຂ້ານ, ພຣະອົງປະສົງໃຫ້ພວກເຮົາເວົ້າຕໍ່ກັນແລະກັນດ້ວຍຄຳເວົ້າ, ສຽງເພງ, ແລະຄຳອະທິຖານ. ແລະພຣະອົງປະສົງໃຫ້ພວກເຮົາປະຕິບັດຕໍ່ກັນແລະກັນດ້ວຍພຣະຄຸນ. ຄຣິສຕະຈັກໄດ້ຮັບຄວາມເຂັ້ມແຂງຂຶ້ນເມື່ອຜູ້ທີ່ເຊື່ອໄດ້ດຳລົງຊີວິດຢູ່ພາຍໃຕ້ການຊົງນຳຂອງພຣະວິນຍານ.

ນຳໃຊ້ໃນຊີວິດ

ພຣະເຈົ້າອາດຈະໃຊ້ທ່ານແນວໃດເພື່ອສ້າງຄວາມເຂັ້ມແຂງໃຫ້ຄົນອື່ນໃນຄຣິສຕະຈັກຂອງພຣະອົງ? ແລະທ່ານຈະເຮັດໃຫ້ຄຣິສຕະຈັກຂອງພຣະອົງເຂັ້ມແຂງຂຶ້ນໄດ້ແນວໃດ? ຈົ່ງພິຈາຣະນາເບິ່ງການນຳໃຊ້ຂ້າງລຸ່ມນີ້:

➢ **ບົ່ງບອກ**. ຜ່ານການອະທິຖານແລະການຄົ້ນຄວ້າພີສູດ, ບົ່ງບອກຄວາມບາບແລະການລໍ້ລວງອີກ. ສາລະພາບສິ່ງເຫລົ່ານີ້ຕໍ່ພຣະເຈົ້າແລະຂໍໃຫ້ພຣະອົງນຳຄົນອື່ນເຂົ້າມາໃນຊີວິດຂອງທ່ານເພື່ອເສີມສ້າງການໃຊ້ຊີວິດຂອງທ່ານ.
➢**ອິດທິພົນ**. ເມື່ອທ່ານປະສົບກັບຄວາມເຂັ້ມແຂງແລະມີຊັຍຊະນະໃນຊີວິດຂອງທ່ານເອງ, ຊອກຫາໂອກາດທີ່ຈະມີອິດທິພົນ(ຈູງໃຈ)ຕໍ່ຄົນອື່ນໂດຍການເປັນສະມາຊິກທີ່ບໍ່ເຫັນແກ່ຕົວແລະຍອມເຊື່ອຟັງໃນຄຣິສຕະຈັກຂອງທ່ານ.
➢**ເຊີນເຂົ້າຮ່ວມ**. ເຊີນຊວນຄຣິສຕຽນຄົນອື່ນຫລືກຸ່ມຄຣິສຕຽນເຂົ້າມາເປັນສ່ວນນຶ່ງໃນການຕໍ່ສູ້ກັບການທົດລອງ. ສາລະພາບການຖືກທົດລອງຂອງທ່ານຕໍ່ພີ່ນ້ອງແລະຍອມໃຫ້ເຂົາສາລະພາບຕໍ່ທ່ານນຳ. ຈົ່ງຢືນຢູ່ນຳກັນເພື່ອຕໍ່ສູ້ກັບບັນຫາເຫລົ່ານັ້ນ.

ພຣະເຈົ້າໃຊ້ພຣະວິນຍານຂອງພຣະອົງ ແລະໄພ່ພົນຂອງພຣະອົງມາເສີມກຳລັງພວກເຮົາໃຫ້ຕໍ່ຕ້ານທາງຂອງໂລກ. ຂໍໃຫ້ແນ່ໃຈວ່າ ເຮົາຍອມໃຫ້ຄວາມປາຖນາຂອງພຣະອົງກາຍເປັນຄວາມປາຖນາຂອງພວກເຮົາແລະໃຫ້ສິ່ງບໍ່ດີເຫລົ່ານັ້ນຢູ່ນອກຊີວິດຂອງພວກເຮົາ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org